## ການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດພາຍໃນແຂວງໄຊຍະບູລີ




ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ (ທຫລ.ຫຼບ) ໄດ້ລົງເຄື່ອນໄຫວວຽກງານຄຸ້ມຄອງເງິນຕາຕ່າງປະເທດ ພາຍໃນແຂວງໄຊຍະບູລີ. ການເຄື່ອນໄຫວດັ່ງກ່າວ ທຫລ.ຫຼບ ໄດ້ຈັດກອງປະຊຸມປຶກສາຫາລືວຽກງານຄຸ້ມຄອງເງິນຕາຕ່າງປະເທດ ຮ່ວມກັບພະແນກການກ່ຽວຂ້ອງຂອງແຂວງ ໂດຍການເປັນປະທານຂອງທ່ານຮອງເຈົ້າແຂວງໄຊຍະບູລີ ຜູ້ຊີ້ນຳວຽກງານເສດຖະກິດ ໃນວັນທີ 24 ຕຸລາ 2022 ທີ່ຫ້ອງປະຊຸມ ຫ້ອງວ່າການແຂວງໄຊຍະບູລີ. ຫຼັງຈາກນັ້ນ ກໍໄດ້ລົງເຄື່ອນໄຫວວຽກງານດັ່ງກ່າວຮ່ວມກັບບັນດາເມືອງ ໂດຍສະເພາະຢູ່ ເມືອງປາກລາຍ, ເມືອງແກ່ນທ້າວ ແລະ ເມືອງບໍ່ແຕນ ລະຫວ່າງວັນທີ 25-28 ຕຸລາ 2022 ແລະ ເມືອງຄອບ, ເມືອງເງິນ ແລະ ເມືອງຊຽງຮ່ອນ ລະຫວ່າງວັນທີ 14-16 ພະຈິກ 2022.

ການເຄື່ອນໄຫວຮ່ວມກັບບັນດາເມືອງໃນຄັ້ງນີ້ ຄະນະຈາກ ທຫລ.ຫຼບ ໄດ້ເປີດກອງປະຊຸມຮ່ວມກັບຄະນະຊີ້ນຳ ແລະ ອານຸກຳມະການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບຂັ້ນເມືອງ ແລະ ບັນດາຫ້ອງການອ້ອມຂ້າງເມືອງ ທີ່ກ່ຽວຂ້ອງ ຫຼາຍກ່ວາ 10 ພາກສ່ວນເຂົ້າຮ່ວມ ໂດຍການເປັນປະທານຮ່ວມຂອງທ່ານຮອງເຈົ້າເມືອງ ຜູ້ຊີ້ນຳວຽກງານເສດຖະກິດ ແລະ ທ່ານ ນາງ ພຸດດາວັນ ສິຣິສົມບັດ ຮອງຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ທີ່ຫ້ອງວ່າການເມືອງຂອງບັນດາເມືອງ.



ໃນກອງປະຊຸມໄດ້ມີການລາຍງານສະພາບເສດຖະກິດພາຍໃນເມືອງໃນໄລຍະຜ່ານມາ ເປັນຕົ້ນແມ່ນ ການຜະລິດ, ສະພາບການຄ້າ ແລະ ການລົງທຶນ. ຄຽງຄູ່ກັນນັ້ນ, ຍັງໄດ້ເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເລກທີ່ 55/ສພຊ, ລົງວັນທີ 22 ທັນວາ 2014 ບາງມາດຕາ. ພ້ອມທັງໄດ້ປຶກສາຫາລື, ທົບທວນຄືນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດໃນໄລຍະຜ່ານມາ ຢູ່ພາຍໃນເມືອງ ໂດຍສະເພາະແມ່ນການລົງຕິດຕາມ, ກວດກາ ການຕິດປະກາດ ແລະ ໂຄສະນາລາຄາສິນຄ້າເປັນເງິນຕາຕ່າງປະເທດ, ການແລກປ່ຽນເງິນຕາຕ່າງປະເທດທີ່ບໍ່ໄດ້ຮັບອະນຸຍາດ, ລົງກວດກາຮ້ານແລກປ່ຽນເງິນຕາຕົວແທນຂອງທະນາຄານທຸລະກິດ, ເກັບກຳຂໍ້ມູນສະພາບການຊຳລະລະຫວ່າງຊາຍແດນ ແລະ ການຕິດຕາມການນຳເງິນສົດເຂົ້າ-ອອກ ຕາມດ່ານຊາຍແດນຕ່າງໆ.





ພາຍຫຼັງສຳເລັດກອງປະຊຸມ ທຫລ.ຫຼບ ໄດ້ສົມທົບກັບບັນດາພາກສ່ວນກ່ຽວຂ້ອງຂອງເມືອງ ລົງເຄື່ອນໄຫວຕິດຕາມກວດກາບັນດາບໍລິສັດ, ຫ້າງຮ້ານ ແລະ ສະຖານທີ່ຕ່າງໆທີ່ມີການນຳໃຊ້ເງິນຕາຕ່າງປະເທດຢ່າງແຜ່ຫຼາຍພາຍໃນເທດສະບານເມືອງ ພ້ອມທັງຕັກເຕືອນບັນດາຫ້າງຮ້ານທີ່ມີການຕິດປະກາດ, ໂຄສະນາລາຄາສິນຄ້າເປັນເງິນຕາຕ່າງປະເທດ ແລະ ແລກປ່ຽນເງິນຕາຕ່າງປະເທດໂດຍບໍ່ໄດ້ຮັບອະນຸຍາດ. ພ້ອມດຽວກັນນັ້ນ, ຄະນະດັ່ງກ່າວຍັງລົງເຄື່ອນໄຫວວຽກງານຕິດຕາມການນຳເງິນສົດເຂົ້າ-ອອກປະເທດ ຜ່ານດ່ານຊາຍແດນ ແລະ ປຶກສາຫາລືກ່ຽວກັບວຽກງານການຕິດຕາມກະແສເງິນຕາໄຫຼເຂົ້າ ຈາກການນຳເຂົ້າ-ສົ່ງອອກສິນຄ້າໄປຕ່າງປະເທດ.

**ຂ່າວ: ເຄນສະຫວັດ ສຸກສະຫວັນ**

**ພາບ: ກັນຈະນາ ໄຊຍະວົງ**